ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 262 /ນຍ

ນະຄອນຫລວງວຽງຈັນ, ວັນທີ 28. 6. 2012.

# ດຳລັດ
## ວ່າດ້ວຍການຈັດຕັ້ງ
## ແລະ ການເຄື່ອນໄຫວຂອງ ກະຊວງກະສິກຳ ແລະ ປ່າໄມ້

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ ລົງວັນທີ 06/05/2003;
- ອີງຕາມ ລັດຖະດຳລັດຂອງປະທານປະເທດແຫ່ງ ສປປ ລາວ ສະບັບເລກທີ 107/ປປທ, ລົງວັນທີ 30/06/2011 ກ່ຽວກັບໂຄງປະກອບກົງຈັກ, ການແຕ່ງຕັ້ງນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ ແລະ ຄະນະລັດຖະບານແຫ່ງ ສປປ ລາວ;
- ອີງຕາມ ໜັງສືສະເໜີ ຂອງທ່ານລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບ ເລກທີ 0802 /ກປ, ລົງວັນທີ 05 ມິຖຸນາ 2012;
- ອີງຕາມ ໜັງສືສະເໜີ ຂອງທ່ານລັດຖະມົນຕີວ່າການກະຊວງພາຍໃນ ສະບັບເລກທີ 227/ພນ, ລົງວັນທີ 08 ມິຖຸນາ 2012.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງທາງດ້ານນິຕິກຳໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້ ແນໃສ່ຈັດຕັ້ງປະຕິບັດແນວທາງ, ນະໂຍບາຍຂອງພັກ ແລະ ລັດຖະບານ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາວຽກງານກະສິກຳ ແລະ ປ່າໄມ້ ໃນຂອບເຂດທົ່ວປະເທດ.

ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ

ກະຊວງກະສິກຳ ແລະ ປ່າໄມ້ ຊຶ່ງນເປັນຕົວອັກສອນຫຍໍ້ວ່າ“ກປ” ສັງກັດໃນໂຄງປະກອບກົງຈັກຂອງລັດຖະບານ ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງມະຫາພາກກ່ຽວກັບການພັດທະນາກະສິກຳ ແລະ ປ່າໄມ້ ເພື່ອຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ, ສ້າງແຫຼ່ງວັດຖຸດິບສະໜອງໃຫ້ແກ່ອຸດສາຫະກຳປຸງແຕ່ງ ແລະ ຜະລິດເປັນສິນຄ້າຕາມທິດການພັດທະນາແບບຍືນຍົງ, ສະອາດ ແລະ ທັນສະໄໝ, ຈັດສັນອາຊີບຄົງທີ່ໃຫ້ປະຊາຊົນບັນດາເຜົ່າ ເພື່ອຢຸດຕິການຖາງປ່າເຮັດໄຮ່ ແລະ ແກ້ໄຂຄວາມທຸກຍາກໃນຂອບເຂດທົ່ວປະເທດ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

ມາດຕາ 3. ໜ້າທີ່

3.1 ປະຕິບັດຕາມລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດ, ລັດຖະດຳລັດຂອງປະທານປະເທດ ແລະ ນິຕິກຳຕ່າງໆ ຂອງນາຍົກລັດຖະມົນຕີວາງອອກ;

3.2 ຄົ້ນຄວ້າຫັນເອົາແນວທາງນະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດ, ມະຕິຕົກລົງຂອງລັດຖະບານ ທີ່ພົວພັນເຖິງຂະແໜງກະສິກຳ ແລະ ປ່າໄມ້ ມາເປັນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຮັບຜິດຊອບຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;

3.3 ສະເໜີປັບປຸງ ຫລື ສ້າງຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງລັດຖະດຳລັດ, ຮ່າງດຳລັດຕໍ່ລັດຖະບານ ແລະ ຜັນຂະຫຍາຍເປັນຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ, ລະບຽບການ, ກຳນົດໝາຍເຕັກນິກ ແລະ ວິທີການຊຸກຍູ້ສົ່ງເສີມທີ່ແທດເໝາະກັບການຜະລິດສະບຽງອາຫານ, ການຜະລິດສິນຄ້າກະສິກຳ ເພື່ອຮັບປະກັນການປະຕິບັດຄາດໝາຍທີ່ຂັ້ນເທິງວາງອອກໃຫ້ມີປະສິດທິຜົນສູງ;

3.4 ຄຸ້ມຄອງ, ຊີ້ນຳ, ຊຸກຍູ້, ຕິດຕາມກວດກາ, ກວດການ ແລະ ປະເມີນຜົນການຈັດຕັ້ງປະຕິບັດລະບຽບ, ກົດໝາຍ, ຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການ ລວມທັງນິຕິກຳຕ່າງໆທີ່ລັດຖະບານ ແລະ ກະຊວງກະສິກຳ ແລະ ປ່າໄມ້ໄດ້ວາງອອກໃນແຕ່ລະໄລຍະ;

3.5 ຄົ້ນຄວ້າ, ທົດລອງດ້ານວິທະຍາສາດ, ເຕັກນິກ, ເຕັກໂນໂລຊີດ້ານກະສິກຳ ແລະ ປ່າໄມ້ ພ້ອມທັງປັບປຸງ, ເລືອກເຟັ້ນ ແລະ ນຳໃຊ້ຜົນສຳເລັດຈາກລະດັບຂົງເຂດ, ພາກພື້ນ ແລະ ສາກົນທີ່ເໝາະສົມກັບເງື່ອນໄຂເສດຖະກິດ-ສັງຄົມ ຂອງ ສປປ ລາວ ໂດຍປະສົມປະສານກັບບົດຮຽນ ແລະ ປະສົບການຂອງທ້ອງຖິ່ນ ເພື່ອຊຸກຍູ້ໃຫ້ມີການຜະລິດແນວພັນພືດ, ໄມ້, ສັດ, ປາ ແລະ ສັດນ້ຳ ທີ່ມີຄຸນນະພາບສູງຕອບສະໜອງໃຫ້ສັງຄົມຢ່າງພຽງພໍ ແລະ ຍົກຜະລິດຕະພາບຂອງການຜະລິດກະສິກຳ ແລະ ປ່າໄມ້ ໃຫ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ ແລະ ຍືນຍົງ;

3.6 ຄຸ້ມຄອງ, ກວດກາ, ຢັ້ງຢືນດ້ານສຸຂານາໄມ, ສຸຂາອານາໄມພືດ ຕາມມາດຕະຖານຂອງຜະລິດຕະພັນພາຍໃນ ແລະ ສາກົນວາງອອກ ລວມທັງຄຸ້ມຄອງການນຳເຂົ້າ-ສົ່ງອອກ, ກວດກາຄຸນນະພາບ, ມາດຕະຖານ ແລະ ປັດໃຈຊຸກຍູ້ການຜະລິດກະສິກຳເຊັ່ນ: ຝຸ່ນວິທະຍາສາດ, ຝຸ່ນຊີ

ວະພາບ, ຢາປາບສັດຕູພືດ, ຢາປົວພະຍາດສັດ, ຢາວັກຊີນ, ອາຫານສັດ, ແນວພັນພືດ, ແນວພັນສັດ; ຄຸ້ມຄອງການນຳໃຊ້, ການເຄື່ອນຍ້າຍ ແລະ ປົກປັກຮັກສາພືດ, ສັດລ້ຽງ, ສັດນ້ຳ, ແນວພັນ, ກົນຈັກ ແລະ ອຸປະກອນການຜະລິດກະສິກຳ ແລະ ປ່າໄມ້ ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດຕາມກົດໝາຍ ແລະ ລະບຽບການຂອງຂະແໜງການວາງອອກ;

3.7 ຄຸ້ມຄອງ ແລະ ພັດທະນາລະບົບຊົນລະປະທານ ແລະ ການລະບາຍ ເພື່ອເຮັດໃຫ້ການສະໜອງ ແລະ ນຳໃຊ້ນ້ຳມີປະສິດທິພາບສູງກ້າວໄປສູ່ການສ້າງເປັນລະບົບຊົນລະກະເສດທີ່ມີຄວາມກ້າວໜ້າ, ທັນສະໄໝ ແລະ ຍືນຍົງ;

3.8 ຄຸ້ມຄອງ, ຊຸກຍູ້ສົ່ງເສີມ, ຕິດຕາມກວດກາ ການລົງທຶນຂອງຜູ້ປະກອບການໃນຂະແໜງກະສິກຳ ແລະ ປ່າໄມ້ ໃຫ້ສາມາດດຳເນີນກິດຈະການໄດ້ຢ່າງມີປະສິດທິຜົນ ລວມທັງວັດຖຸດິບຈາກການກະສິກຳ ແລະ ປ່າໄມ້ ໃຫ້ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ເພື່ອສະໜອງໃຫ້ແກ່ອຸດສາຫະກຳປຸງແຕ່ງ;

3.9 ສຳຫລວດ, ຈັດສັນ, ກຳນົດເຂດປູກຕົ້ນໄມ້ ເພື່ອສິ່ງແວດລ້ອມ, ຄຸ້ມຄອງ ແລະ ຊຸກຍູ້ສົ່ງເສີມການປູກໄມ້ເສດຖະກິດ. ກວດກາ, ກວດການ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ແລະ ບັນດານິຕິກຳກ່ຽວກັບວຽກງານປ່າໄມ້, ທີ່ດິນປ່າໄມ້ທີ່ກະຊວງກະສິກຳ ແລະ ປ່າໄມ້ຄຸ້ມຄອງ;

3.10 ດຳເນີນການສຳຫລວດ, ວາງແຜນການຄຸ້ມຄອງປ່າຜະລິດ, ປ່າໄມ້ບ້ານ, ເຄື່ອງປ່າຂອງດົງໃນຂອບເຂດປະເພດປ່າໄມ້ທີ່ຕົນຮັບຜິດຊອບ ແລະ ປະກອບສ່ວນຕິດຕາມການປົກຫຸ້ມຂອງປ່າໄມ້ໃນຂອບເຂດທົ່ວປະເທດ;

3.11 ຕິດຕາມ, ກວດກາ ການທຳລາຍປ່າໄມ້ ລວມທັງວາງມາດຕະການຕ້ານ ແລະ ສະກັດກັ້ນການລັກລອບຕັດໄມ້, ການຊື້-ຂາຍ, ການເຄື່ອນຍ້າຍເຄື່ອງປ່າຂອງດົງ, ຊີວະນາໆພັນ, ສັດນ້ຳ-ສັດປ່າທີ່ຜິດຕໍ່ກົດໝາຍ; ດຳເນີນການສອບສວນ, ສືບສວນຕໍ່ຜູ້ກະທຳຜິດກົດໝາຍປ່າໄມ້, ກົດໝາຍສັດນ້ຳ-ສັດປ່າ ຕາມລະບຽບກົດໝາຍທີ່ກຳນົດໄວ້ ໃນຂອບເຂດຄວາມຮັບຜິດຊອບຂອງຕົນໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

3.12 ສ້າງ ແລະ ປັບປຸງສູນບໍລິການເຕັກນິກກະສິກຳ ແລະ ປ່າໄມ້ ຂັ້ນຕ່າງໆ ໃຫ້ສາມາດບໍລິການໄດ້ເພື່ອເຮັດໜ້າທີ່ຝຶກອົບຮົມ, ຖ່າຍທອດເຕັກນິກວິທະຍາສາດໃໝ່ ໃຫ້ປະຊາຊົນ, ຜູ້ຜະລິດ ແລະຜູ້ປະກອບການຕ່າງໆ ພ້ອມທັງສ້າງວິຊາການກະສິກຳ ແລະ ປ່າໄມ້ຂັ້ນບ້ານ;

3.13 ຄົ້ນຄວ້າ ແລະ ກຳນົດນະໂຍບາຍທີ່ເໝາະສົມ ເພື່ອຄຸ້ມຄອງສົ່ງເສີມການສ້າງເສດຖະກິດຄອບຄົວ, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຸ່ມການຜະລິດ, ກຸ່ມສິນເຊື່ອ, ກອງທຶນພັດທະນາບ້ານ, ສະຫະກອນກະສິກຳ ແລະ ປ່າໄມ້ແບບໃໝ່, ຮູບແບບການຜະລິດຂອງລັດ ແລະລວມໝູ່ຂອງທຸກພາກສ່ວນເສດຖະກິດ ຕາມທິດເຮັດກະສິກຳສະອາດ, ຂະຫຍາຍການກະເສດສຸມທີ່ທັນສະໄໝ ແລະ ມີສະມັດຖະພາບສູງ;

3.14 ພົວພັນຮ່ວມມື, ຂົນຂວາຍຍາດແຍ່ງການຊ່ວຍເຫລືອ ແລະ ການລົງທຶນຈາກພາຍໃນ, ຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ແຫລ່ງທຶນອື່ນໆ ບົນພື້ນຖານກົດໝາຍ ແລະ ລະບຽບການທີ່ກຳນົດໄວ້ ເພື່ອພັດທະນາຂະແໜງການກະສິກຳ ແລະ ປ່າໄມ້ ພ້ອມທັງປະຕິບັດພັນທະຕໍ່ສົນທິສັນຍາ, ອານຸສັນຍາ ແລະ ຂໍ້ຕົກລົງສາກົນ ທີ່ ສປປ ລາວ ໄດ້ເຂົ້າເປັນພາຄີ ແລະ ສະມາຊິກຢ່າງຕັ້ງໜ້າ;

3.15 ດຳເນີນການສຳຫລວດ, ກຳນົດຈັດສັນ, ແບ່ງເຂດທີ່ດິນກະສິກຳ, ດິນບໍລິເວນນ້ຳ, ດິນເຂດສ້າງຊົນລະປະທານ. ສະເໜີຂຶ້ນທະບຽນທີ່ດິນກະສິກຳ, ທີ່ດິນປ່າໄມ້ ທີ່ກະຊວງກະສິກຳ ແລະ ປ່າໄມ້ຄຸ້ມຄອງ, ຄົ້ນຄວ້າວາງລະບຽບການຄຸ້ມຄອງ, ນຳໃຊ້, ປົກປັກຮັກສານັບທັງການຢຸດຕິການຖາງປ່າເຮັດໄຮ່, ມອບດິນ-ມອບປ່າໃຫ້ຄອບຄົວເພື່ອນຳໃຊ້ເຂົ້າໃນການຜະລິດ, ສ້າງອາຊີບຄົງທີ່ ແລະ ພັດທະນາທີ່ດິນກະສິກຳ ແລະ ປ່າໄມ້ ຕາມການອະນຸມັດຂອງລັດຖະບານ ແລະ ບົນພື້ນຖານກົດໝາຍກຳນົດໄວ້;

3.16 ຊີ້ນຳ, ຄຸ້ມຄອງ, ຕິດຕາມ ແລະ ກວດກາກ່ຽວກັບການປະຕິບັດພາລະບົດບາດໜ້າທີ່ຂອງບັນດາການຈັດຕັ້ງທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ບົນພື້ນຖານປະສານສົມທົບກັບພາກສ່ວນກ່ຽວຂ້ອງ;

3.17 ກໍ່ສ້າງ, ບຳລຸງຍົກລະດັບບຸກຄະລາກອນໃນຂະແໜງການຂອງຕົນ. ຄົ້ນຄ້ວາ, ປັບປຸງກົງຈັກການຈັດຕັ້ງ, ກຳນົດມາດຕະຖານຕຳແໜ່ງງານ ໃຫ້ສອດຄ່ອງກັບໜ້າທີ່ການເມືອງ ໃນແຕ່ລະໄລຍະ; ຄຸ້ມຄອງ, ນຳໃຊ້ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານ-ລັດຖະກອນ ຂອງຕົນ; ຄົ້ນຄ້ວາມີຄຳເຫັນໃຫ້ອົງການປົກຄອງຂັ້ນແຂວງ ແລະ ຂັ້ນເມືອງ ໃນການຕົກລົງແຕ່ງຕັ້ງ, ສັບຊ້ອນໜ້າທີ່ວຽກງານບຸກຄະລາກອນຂະແໜງກະສິກຳ ແລະ ປ່າໄມ້ຢູ່ທ້ອງຖິ່ນ;

3.18 ສ້າງ, ຄຸ້ມຄອງ, ປັບປຸງ ແລະ ຂະຫຍາຍລະບົບເຄືອຂ່າຍຖານຂໍ້ມູນສະຖິຕິ ແລະ ຂ່າວສານກະສິກຳ ແລະ ປ່າໄມ້ ພ້ອມທັງໂຄສະນາເຜີຍແຜ່ອອກຢ່າງກວ້າງຂວາງໃນທົ່ວສັງຄົມ;

3.19 ຄຸ້ມຄອງບໍລິຫານ, ການເງິນ, ຊັບສິນຂອງກະຊວງ ພ້ອມທັງຂຶ້ນແຜນການ, ງົບປະມານ ແລະ ສະຫລຸບສັງລວມ ຕາມກົດໝາຍທີ່ໄດ້ກຳນົດໄວ້;

3.20 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 4. ຂອບເຂດສິດ**

4.1 ສະເໜີໂຄງປະກອບກົງຈັກການຈັດຕັ້ງຕໍ່ລັດຖະບານ, ກຳນົດຈຳນວນຕຳແໜ່ງງານ ແລະ ການຈັດວາງບຸກຄະລາກອນໃນລະດັບກະຊວງ ແລະ ໃນທົ່ວຂະແໜງການສາຍຕັ້ງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະຕາມກົດໝາຍ, ນິຕິກຳ ແລະ ລະບຽບການ ຂອງລັດຖະບານວາງອອກ; ຕົກລົງສ້າງຕັ້ງ, ປັບປຸງ ຫລື ຍຸບເລີກ ບັນດາກົງຈັກທີ່ຢູ່ໃນຄວາມຮັບຜິດຊອບຂອງກະຊວງກະສິກຳ ແລະ ປ່າໄມ້ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ລະບຽບການທີ່ວາງໄວ້. ກຳນົດກົນໄກປະສານງານ ແລະ ແບບແຜນວິທີເຮັດວຽກ ເພື່ອຮັບໃຊ້ກົງຈັກການຈັດຕັ້ງຂອງກະຊວງ ແລະ ຂອງທົ່ວຂະແໜງການ ອີງໃສ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4.2 ອອກຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ແລະ ຄຳແນະນຳ ລວມທັງຄົ້ນຄ້ວາ ແລະ ປະກາດໃຊ້ລະບຽບການ, ກຳນົດໝາຍເຕັກນິກ ເພື່ອຄຸ້ມຄອງມະຫາພາກດ້ານກະສິກຳໃຫ້ໄປຕາມລະບຽບ, ກົດໝາຍກຳນົດໄວ້;

4.3 ອອກຂໍ້ຕົກລົງ, ຄຳສັ່ງຕ່າງໆ ກ່ຽວກັບວຽກງານຄຸ້ມຄອງ ແລະ ນຳໃຊ້ພະນັກງານ-ລັດຖະກອນທີ່ຢູ່ໃນຄວາມຮັບຜິດຊອບຄຸ້ມຄອງຂອງກະຊວງ (ແຕ່ງຕັ້ງ, ເລື່ອນຂັ້ນ, ຍ້ອງຍໍ, ປະຕິບັດວິໄນ, ສັບຊ້ອນ, ຈັດວາງ, ຍົກຍ້າຍໜ້າທີ່, ປົດຕຳແໜ່ງ ແລະ ອື່ນໆ). ຕິດຕາມ, ກວດກາ, ກວດການ ແລະ ຍົກເລີກການແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງພະນັກງານ-ລັດຖະກອນ ຂອງການຈັດຕັ້ງຂັ້ນຕ່າງໆ ທີ່ບໍ່ສອດຄ່ອງກັບເງື່ອນໄຂ ມາດຕະຖານຕຳແໜ່ງງານ ຂອງກະຊວງກະສິກຳ ແລະ ປ່າໄມ້ ໄດ້ກຳນົດໄວ້;

4.4 ຊີ້ນຳ, ຄຸ້ມຄອງ, ກວດກາ, ກວດການ ແລະ ປະເມີນຜົນການຈັດຕັ້ງປະຕິບັດລະບຽບກົດໝາຍ ຕາມຂອບເຂດສິດ ທີ່ຂະແໜງການກະສິກຳ ແລະ ປ່າໄມ້ ຮັບຜິດຊອບ;

4.5 ງົດການປະຕິບັດ, ລົບລ້າງ ຫລື ຍົກເລີກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ຂອງ ອົງການຈັດຕັ້ງຂັ້ນລຸ່ມ ທີ່ຂັດກັບຂະແໜງການຕົນ. ສະເໜີຕໍ່ລັດຖະບານ ກ່ຽວກັບການປັບປຸງ, ງົດການປະຕິບັດ, ລົບລ້າງ ຫລື ຍົກເລີກ ນິຕິກຳຂອງຂະແໜງການອື່ນ ແລະ ຂອງອົງການປົກຄອງທ້ອງຖິ່ນ ທີ່ຂັດກັບລະບຽບການຕ່າງໆ ຂອງຂະແໜງການກະສິກຳ ແລະ ປ່າໄມ້ ຫລື ຂັດກັບລະບຽບກົດໝາຍ;

4.6 ພົວພັນ, ຮ່ວມມື, ຍາດແຍ່ງການຊ່ວຍເຫລືອ, ການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາວຽກງານກະສິກຳ ແລະ ປ່າໄມ້ ແລະ ວຽກງານອື່ນໆຕາມການມອບໝາຍ ຫລື ຕາມການຕົກລົງຂອງລັດຖະບານ ບົນພື້ນຖານກົດໝາຍ, ລະບຽບການທີ່ກຳນົດໄວ້;

4.7 ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຕົກລົງກ່ຽວກັບການລົງທຶນພາຍໃນ ແລະ ຕ່າງປະເທດດ້ານກະສິກຳ ແລະ ປ່າໄມ້ ບົນພື້ນຖານກົດໝາຍ, ຂໍ້ກຳນົດ ແລະ ລະບຽບການທີ່ລັດຖະບານປະກາດໃຊ້ໃນແຕ່ລະໄລຍະ;

4.8 ເຊັນສັນຍາ, ອະນຸສັນຍາ ແລະ ບົດບັນທຶກຮ່ວມມື ກັບຕ່າງປະເທດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ ຕາມການອະນຸມັດຂອງລັດຖະບານ;

4.9 ຈັດຕັ້ງປະຕິບັດ, ຄຸ້ມຄອງ ແລະ ກວດກາ ການນຳໃຊ້ງົບປະມານ ໃນຂະແໜງການກະສິກຳ ແລະ ປ່າໄມ້ ໃຫ້ໄປຕາມລະບຽບການ ແລະ ກົດໝາຍ ທີ່ກຳນົດໄວ້;

4.10 ປະຕິບັດສິດອື່ນໆ ຕາມການມອບໝາຍຂອງລັດຖະບານ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5.** ໂຄງປະກອບກົງຈັກ

ກ. ຢູ່ຂັ້ນສູນກາງປະກອບມີ:

1. ຫ້ອງການ
2. ກົມ ຈັດຕັ້ງ ແລະ ພະນັກງານ
3. ກົມ ກວດກາ
4. ກົມ ແຜນການ ແລະ ການຮ່ວມມື
5. ກົມ ປູກຝັງ
6. ກົມ ລ້ຽງສັດ ແລະ ການປະມົງ
7. ກົມ ຊົນລະປະທານ
8. ກົມ ປ່າໄມ້
9. ກົມ ກວດກາປ່າໄມ້
10. ກົມ ຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ
11. ກົມ ສົ່ງເສີມກະສິກຳ ແລະ ສະຫະກອນ
12. ສະຖາບັນ ຄົ້ນຄ້ວາກະສິກຳ ແລະ ປ່າໄມ້ແຫ່ງຊາດ

ນອກນີ້ ຍັງມີສະພາວິທະຍາສາດເຕັກນິກກະສິກຳ ແລະ ປ່າໄມ້, ມີບັນດາຫົວໜ່ວຍວິຊາການຂັ້ນສອງ ທີ່ຂຶ້ນກັບຫ້ອງການ ແລະ ກົມຕື:

- ຂຶ້ນກັບຫ້ອງການກະຊວງປະກອບມີ:
  ຫ້ອງການສະພາວິທະຍາສາດເຕັກນິກກະສິກຳ ແລະ ປ່າໄມ້
- ຂຶ້ນກັບກົມປະກອບມີ:
  1. ວິທະຍາໄລກະສິກຳ ແລະ ປ່າໄມ້ ພາກເໜືອ
  2. ວິທະຍາໄລກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ
  3. ວິທະຍາໄລກະສິກຳ ແລະ ປ່າໄມ້ ສະຫວັນນະເຂດ
  4. ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ
  5. ໂຮງຮຽນຊົນລະປະທານຂັ້ນສູງ ທ່າງ່ອນ

ບັນດາການຈັດຕັ້ງຫົວໜ່ວຍວິຊາການຂັ້ນສອງເຫລົ່ານີ້, ຜູ້ເປັນຫົວໜ້າມີຖານະທຽບເທົ່າກັບຮອງຫົວໜ້າກົມ.

ພາຍໃນຫ້ອງການ, ບັນດາກົມ ແລະ ສະຖາບັນຄົ້ນຄວ້າ ມີພະແນກການ, ກອງວິຊາການ, ສູນ, ສະຖານີ ແລະ ອື່ນໆ ຊຶ່ງຈັດຕັ້ງຂຶ້ນຕາມຄວາມຮຽກຮ້ອງຕ້ອງການທີ່ຈຳເປັນຂອງວຽກງານ.

ຂ. ຢູ່ຂັ້ນທ້ອງຖິ່ນປະກອບມີ:

1. ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ;
2. ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ.

**ມາດຕາ 6. ໂຄງປະກອບດ້ານບຸກຄະລາກອນ**

6.1 ກະຊວງກະສິກຳ ແລະ ປ່າໄມ້ ປະກອບດ້ວຍລັດຖະມົນຕີວ່າການ 01 ທ່ານ ຊຶ່ງໄດ້ຮັບການແຕ່ງຕັ້ງ ຫລື ປົດຕຳແໜ່ງຈາກປະທານປະເທດ ບົນພື້ນຖານການສະເໜີຂອງນາຍົກລັດຖະມົນຕີໂດຍຜ່ານການຮັບຮອງຈາກສະພາແຫ່ງຊາດ. ລັດຖະມົນຕີວ່າການເປັນສະມາຊິກລັດຖະບານ, ມີຄວາມຮັບຜິດຊອບໃນການປະຕິບັດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງກະຊວງຕາມດຳລັດສະບັບນີ້ ແລະ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ;

6.2 ກະຊວງກະສິກຳ ແລະ ປ່າໄມ້ ປະກອບມີລັດຖະມົນຕີຊ່ວຍວ່າການຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ ຫລື ປົດຕຳແໜ່ງໂດຍນາຍົກລັດຖະມົນຕີ. ລັດຖະມົນຕີຊ່ວຍວ່າການເປັນຜູ້ຊ່ວຍວຽກລັດຖະມົນຕີວ່າການໃນການນຳພາ, ອຳນວຍຄວບຄຸມວຽກງານລວມຂອງກະຊວງ, ລົງເລິກຮັບຜິດຊອບກຸ່ມວຽກງານໃດໜຶ່ງຕາມການມອບໝາຍຂອງລັດຖະມົນຕີວ່າການ;

ກໍລະນີຕິດຂັດ ຫລື ໄປເຄື່ອນໄຫວວຽກງານທາງໄກ, ລັດຖະມົນຕີວ່າການຕ້ອງມອບສິດປະຈຳການຊົ່ວຄາວເປັນລາຍລັກອັກສອນໃຫ້ລັດຖະມົນຕີຊ່ວຍວ່າການແທນ,ເວລາລັດຖະມົນຕີວ່າການກັບຄືນມາຜູ້ປະຈຳການຕ້ອງລາຍງານວຽກທີ່ຕົນເອງໄດ້ແກ້ໄຂໃຫ້ລັດຖະມົນຕີວ່າການຊາບ;

6.3 ກະຊວງກະສິກຳ ແລະ ປ່າໄມ້ ປະກອບດ້ວຍຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າສະຖາບັນຄົ້ນຄ້ວາ ຊຶ່ງໄດ້ຮັບການແຕ່ງຕັ້ງ ຫລື ປົດຕຳແໜ່ງຈາກນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ແລະ ການເຫັນດີຂອງຄະນະຈັດຕັ້ງສູນກາງພັກ. ນອກນັ້ນ ຍັງປະກອບມີຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າສະ

ຖາບັນຄົ້ນຄ້ວາ, ການນຳຂັ້ນພະແນກ, ກອງວິຊາການ, ສູນ, ສະຖານີ, ວິທະຍາໄລ, ໂຄງການ, ໜ່ວຍງານ ຊຶ່ງໄດ້ຮັບການແຕ່ງຕັ້ງ ຫລື ປົດຕຳແໜ່ງ ຈາກລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້;

6.4 ຢູ່ຂັ້ນທ້ອງຖິ່ນ:

- ມີຫົວໜ້າພະແນກ, ຮອງຫົວໜ້າພະແນກ; ມີຫົວໜ້າ, ຮອງຫົວໜ້າຂະແໜງ ແລະ ບັນດາຕຳແໜ່ງບໍລິຫານປະເພດອື່ນໆ ທີ່ຂຶ້ນກັບພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ;
- ມີຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການ; ມີຫົວໜ້າ, ຮອງຫົວໜ້າໜ່ວຍງານທີ່ຂຶ້ນກັບຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ແຫດສະບານ.

ບັນດາຕຳແໜ່ງຕ່າງໆ ເຫລົ່ານີ້ແມ່ນໄດ້ຮັບການແຕ່ງຕັ້ງ, ປົດຕຳແໜ່ງຕາມລະບຽບກົດໝາຍກຳນົດ ຫລື ຕາມນະໂຍບາຍຂອງລັດຖະບານໃນແຕ່ລະໄລຍະ ຊຶ່ງມີນິຕິກຳກຳນົດຕ່າງຫາກ.

## ໝວດທີ IV
## ຫລັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7. ຫລັກການ**

ປະຕິບັດຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ສົມທົບກັບການປະຕິບັດລະບອບຫົວໜ້າດຽວຕາມການແບ່ງຂັ້ນຄຸ້ມຄອງ ແລະ ບົນພື້ນຖານມີການແບ່ງງານກັນຢ່າງຈະແຈ້ງໃນໝູ່ຄະນະ ແລະ ທຸກຂັ້ນ ພ້ອມທັງມອບສິດ ແລະ ຄວາມຮັບຜິດຊອບ ໃຫ້ສົມເຫດສົມຜົນໃນການຕັດສິນບັນຫາພາຍໃນຂອບເຂດຂອງແຕ່ລະຂັ້ນ ແລະ ແຕ່ລະຄົນ;

**ມາດຕາ 8. ແບບແຜນວິທີເຮັດວຽກ**

8.1 ການເຄື່ອນໄຫວ ແລະ ດຳເນີນວຽກງານຂອງກະຊວງຕ້ອງຫັນເອົາແນວທາງຍຸດທະສາດ, ແຜນນະໂຍບາຍ, ນະໂຍບາຍລວມຂອງສູນກາງພັກ ແລະ ລັດຖະບານ ໃນດ້ານກະສິກຳ ແລະ ປ່າໄມ້ ແລະ ວຽກງານພູລົມະສິດອື່ນໆ ຕາມກຳນົດໄວ້ໃນໜ້າທີ່ມາເປັນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການລະອຽດໃນແຕ່ລະໄລຍະ ໂດຍອີງໃສ່ງົບປະມານພາຍໃນ, ທຶນຊ່ວຍເຫລືອລ້າ, ທຶນກູ້ຢືມຈາກຕ່າງປະເທດ ແລະ ຈາກແຫລ່ງທຶນຕ່າງໆ ຕາມລະບຽບກົດໝາຍທີ່ກຳນົດໄວ້;

8.2 ດຳເນີນການຄຸ້ມຄອງມະຫາພາກຕາມຂະແໜງການສາຍຕັ້ງຢ່າງລວມສູນ ແລະ ເຂັ້ມງວດ, ປະຕິບັດການຫັນເອົາພະນັກງານລົງທ້ອງຖິ່ນຮາກຖານເປັນປົກກະຕິ, ກວດກາ-ກວດການ, ປະເມີນຜົນວຽກງານໃນທົ່ວຂະແໜງກະສິກຳ ແລະ ປ່າໄມ້ຕະຫລອດຮອດຫົວໜ່ວຍວິສະຫະກິດ - ທຸລະກິດ ທີ່ກ່ຽວຂ້ອງກັບວຽກງານກະສິກຳ ແລະ ປ່າໄມ້ ເພື່ອແນ່ໃສ່ຈັດຕັ້ງປະຕິບັດແນວທາງນະໂຍບາຍດ້ານການກະສິກຳ ແລະ ປ່າໄມ້ຂອງພັກ ແລະ ບັນດາລະບຽບກົດໝາຍຂອງລັດໃຫ້ໄດ້ຮັບຜົນດີ.

8.3 ບັນດາເອກະສານນິຕິກຳ ແລະ ກຳນົດໝາຍເຕັກນິກ, ຜົນສຳເລັດດ້ານການຄົ້ນຄວ້າທົດລອງກ່ຽວກັບກະສິກຳ ແລະ ປ່າໄມ້ ຈະຕ້ອງໄດ້ຜ່ານການພິຈາລະນາ ແລະ ຮັບຮອງຈາກສະພາວິທະຍາສາດເຕັກນິກກະສິກຳ ແລະ ປ່າໄມ້ເສຍກ່ອນ ຈຶ່ງນຳສະເໜີໃຫ້ລັດຖະມົນຕີອະນຸມັດ;

8.4 ປະຕິບັດລະບອບປະຊຸມ, ສ່ອງແສງ, ລາຍງານປະຈຳອາທິດ, ປະຈຳເດືອນ, ປະຈຳ 3 ເດືອນ, 6 ເດືອນ, ປະຈຳປີ ແລະ ກອງປະຊຸມວິຊາການຕ່າງໆ ເພື່ອຊຸກຍູ້ຕິດຕາມ ແລະ ກວດກາປະເມີນຜົນ, ກຳສະພາບລວມ ແລະ ສະເພາະດ້ານຈາກທຸກຂົງເຂດວຽກງານ ແລະ ສັງລວມລາຍງານໃຫ້ລັດຖະບານ;

8.5 ພັດທະນາລະບົບຖານຂໍ້ມູນ, ສະຖິຕິ ແລະ ຂໍ້ມູນຂ່າວສານດ້ານກະສິກຳ ແລະ ປ່າໄມ້ ເພື່ອເປັນເຄື່ອງມືຊ່ວຍກິຈຈັກການຈັດຕັ້ງ ແລະ ເປັນບ່ອນອີງໃນການຕັດສິນບັນຫາຕ່າງໆ ຂອງຂະແໜງການ ພ້ອມທັງເຜີຍແຜ່ອອກສູ່ສັງຄົມຢ່າງກວ້າງຂວາງ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 9. ງົບປະມານ ແລະ ຕາປະທັບ**

ກະຊວງກະສິກຳ ແລະ ປ່າໄມ້ ມີງົບປະມານ ແລະ ຕາປະທັບເປັນຂອງຕົນເອງ ເພື່ອເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 10. ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດກ່ຽວກັບພາລະບົດບາດ, ຂອບເຂດສິດ, ໜ້າທີ່ ແລະ ໂຄງປະກອບການຈັດຕັ້ງຂອງຫ້ອງການ, ບັນດາກົມ, ສະຖາບັນຄົ້ນຄວ້າກະສິກຳແຫ່ງຊາດ, ບັນດາຫົວໜ່ວຍກິຈຈັກວິຊາການຂັ້ນສອງ, ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫລວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ທີ່ລະບຸຢູ່ໃນ ມາດຕາ 5 ຂອງດຳລັດສະບັບນີ້.

**ມາດຕາ 11. ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້, ຫ້ອງວ່າການລັດຖະບານ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນຫລວງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12. ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 148/ນຍ, ລົງວັນທີ 10 ພຶດສະພາ 2007.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ